ກະຊວງສາທາລະນະສຸກ

# ຂອບເຂດການປະຕິບັດງານ
# ຂອງທັນຕະແພດ

ສິງຫາ 2019

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0149 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

## ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງເອົາຂອບເຂດການປະຕິບັດງານຂອງທັນຕະແພດ

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກຳມະການວິຊາຊີບປິ່ນປົວ(ບອດ)ດ້ານທັນຕະກຳ.

### ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

**ມາດຕາ 1.** ເຫັນດີຮັບຮອງເອົາ ຂອບເຂດການປະຕິບັດງານຂອງທັນຕະແພດ.

**ມາດຕາ 2.** ມອບໃຫ້ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວ(ບອດ)ດ້ານທັນຕະກຳ ເປັນໃຈກາງ ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການເຜີຍແຜ່, ການຝຶກອົບຮົມ ຂອບເຂດການປະຕິບັດງານຂອງທັນຕະແພດ ສະບັບນີ້ ພ້ອມທັງຊຸກຍູ້ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂອບເຂດການປະຕິບັດງານຂອງທັນຕະແພດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມຈັດຕັ້ງ ແລະ ພະນັກງານ, ກົມການສຶກສາສາທາລະນະສຸກ, ບັນດາຄະນະກຳມະການວິຊາຊີບປິ່ນປົວ(ບອດ) ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ , ມະຫາວິທະຍາໄລວິທະຍາສາດສຸຂະພາບ, ໂຮງໝໍ, ສູນ, ສະຖາບັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ປະທານ ແລະ ຮອງປະທານ ສວປ ທ່ານລະ | 01 ສະບັບ |
| 2. ຄະນະກຳມະການວິຊາຊີບປິ່ນປົວດ້ານທັນຕະກຳ ທ່ານລະ | 01 ສະບັບ |
| 3. ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ | 01 ສະບັບ |
| 4. ຫ້ອງການກະຊວງ, ກົມກອງທີ່ກ່ຽວຂ້ອງ ບ່ອນລະ | 01 ສະບັບ |
| 5. ມວສ, ໂຮງໝໍ, ສູນ ບ່ອນລະ | 01 ສະບັບ |
| 6. ສຳເນົາໄວ້ | 02 ສະບັບ |

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ປອນເມກ ດາລາລອຍ

# ສາລະບານ

ໜ້າ


ຄຳນຳ:........................................................................................................................1

ອະທິບາຍຄຳສັບ:..............................................................................................................1

ສະຖານທີ່ບໍລິການສຸຂະພາບທີ່ອະນຸຍາດໃຫ້ປະຕິບັດງານ:.........................................................................2

ຂອບເຂດການປະຕິບັດງານຂອງທັນຕະແພດທົ່ວໄປ:............................................................................ 2

ຄວາມສາມາດ ຫຼື ຄວາມເປັນມືອາຊີບທາງດ້ານວິຊາຊີບ ແລະ ທັກສະທົ່ວໄປ:...............................................6

ທັກສະໃນການສື່ສານ ແລະ ຄວາມມີມະນຸດສຳພັນ:..............................................................................7

ການບໍລິຫານວຽກງານ ແລະ ຂໍ້ມູນຂ່າວສານ:.........................................................................................7

ການສົ່ງເສີມສຸຂະພາບຜົ້ງປາກ:........................................................................................................8

ເອກະສານຊ້ອນທ້າຍ1: ຂອບເຂດການປະຕິບັດງານສຳລັບທັນຕະແພດທົ່ວໄປ:.............................................9

ເອກະສານຊ້ອນທ້າຍ2: ຂອບເຂດການປະຕິບັດງານທາງດ້ານທັນຕະກຳສະເພາະສາຂາວິຊາ:.............................11

1. ການປິ່ນປົວຮູຮາກແຂ້ວ:..........................................................................................11
2. ທັນຕະລັງສີ:..........................................................................................................11
3. ສັນລະຍະກຳຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ:.................................................................12
4. ອາຍຸລະສາດຜົ້ງປາກ:.............................................................................................13
5. ສັນລະຍະກຳຜົ້ງປາກ:.............................................................................................14
6. ທັນຕະກຳດັດແປງ:.................................................................................................14
7. ທັນຕະກຳເດັກ:......................................................................................................15
8. ທັນຕະກຳປ້ອງກັນ ແລະ ທັນຕະກຳຊຸມຊົນ:......................................................................16
9. ປະຣິທັນວິທະຍາ:....................................................................................................16
10. ແຂ້ວທຽມວິທະຍາ:................................................................................................17
11. ທັນຕະກຳບູລະນະ:................................................................................................18
12. ທັນຕະກຳພິສູດຊາກສົບ/ທັນຕະກຳພິສູດຫຼັກຖານ:...........................................................19

# ຂອບເຂດການປະຕິບັດງານຂອງທັນຕະແພດ

## I. ຄຳນຳ

ວິຊາທັນຕະກຳ ແມ່ນວິຊາຊີບໜຶ່ງໃນຂະແໜງສາທາລະນະສຸກ ເຊິ່ງມີໜ້າທີ່ປະເມີນ, ບົ່ງມະຕິ, ປ້ອງກັນ ແລະ/ຫຼື ປິ່ນປົວພະຍາດ (ແບບບໍ່ຜ່າຕັດ, ຜ່າຕັດ ຫຼື ວິທີການອື່ນໆທີ່ກ່ຽວຂ້ອງ), ຄວາມຜິດປົກກະຕິ ແລະ/ຫຼື ເງື່ອນໄຂທີ່ເປັນພະຍາດໃນຜົ້ງປາກ, ບໍລິເວນຄາງກະໄຕໃບໜ້າ ຫຼື ໂຄງສ້າງທີ່ກ່ຽວຂ້ອງ ເຊິ່ງສົ່ງຜົນສະທ້ອນຕໍ່ຮ່າງກາຍຂອງມະນຸດ. ທັງໝົດເຫຼົ່ານີ້ ຈະໄດ້ຮັບການແກ້ໄຂໂດຍທັນຕະແພດ, ພາຍໃຕ້ຂອບເຂດການສຶກສາ, ການຝຶກອົບຮົມ ແລະ ປະສົບການຂອງຕົນ, ໂດຍສອດຄ່ອງກັບຈັນຍາບັນຂອງວິຊາຊີບ ແລະ ກົດໝາຍທີ່ກ່ຽວຂ້ອງ.

ຂອບເຂດຂອງການປະຕິບັດງານ (Scope of Practice/SOP) ສະບັບນີ້ ໃຊ້ສະເພາະທັນຕະແພດທົ່ວໄປ (General Dentist/GD) ແລະ ຈະບໍ່ຄອບຄຸມເຖິງທັນຕະແພດສະເພາະທາງ (ຊ່ຽວຊານສະເພາະວິຊາ), ແຕ່ໃຫ້ຄຳແນະນຳໃນການປະຕິບັດ ແລະ ກຳນົດຂີດຄວາມສາມາດຕົ້ນຕໍ.

ອີງຕາມຄວາມຕ້ອງການທາງດ້ານຄຸນນະພາບຂອງຜູ້ບໍລິການສຸຂະພາບຜົ້ງປາກ ແລະ ແຂ້ວ (Professionals Qualification Requirements/PQR), ກະຊວງສາທາລະນະສຸກ/ສະພາຄຸ້ມຄອງວິຊາຊີບປິ່ນປົວ(MOH/HPC) ຈຶ່ງໄດ້ສ້າງຂອບເຂດການປະຕິບັດງານຂອງທັນຕະແພດຂຶ້ນ ເພື່ອຈະໄດ້ອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ.

ຂອບເຂດການປະຕິບັດງານຂອງທັນຕະແພດສະບັບນີ້ ມີຈຸດປະສົງເພື່ອສ້າງຄວາມເຂົ້າໃຈກ່ຽວກັບພາລະໜ້າທີ່ ແລະ ຂອບເຂດການປະຕິບັດດ້ານທັນຕະກຳ ໃຫ້ເປັນເອກະພາບກັນໃນກຸ່ມຄົນທີ່ກ່ຽວຂ້ອງຢູ່ ສປປ ລາວ ເຊັ່ນ: ຜູ້ປະກອບວິຊາຊີບປິ່ນປົວ ລວມທັງຜູ້ໃຫ້ບໍລິການດ້ານສຸຂະພາບຜົ້ງປາກອື່ນໆ, ຄົນເຈັບ ແລະ ຄອບຄົວຍາດພີ່ນ້ອງ. ພາລະໜ້າທີ່ ແລະ ຂອບເຂດປະຕິບັດງານທາງດ້ານທັນຕະກຳ ຈະໄດ້ຮັບການປັບປຸງແກ້ໄຂໃຫ້ສອດຄ່ອງຕາມການປ່ຽນແປງໃນແຕ່ລະໄລຍະເມື່ອມີຄວາມຈຳເປັນ ເພື່ອຮັບປະກັນໃຫ້ຄົນເຈັບໄດ້ຮັບການປິ່ນປົວ ທີ່ມີຄຸນນະພາບດີຂຶ້ນ ເຊັ່ນ: ມີການປັບປຸງກົດໝາຍວ່າດ້ວຍການປິ່ນປົວ, ກົດລະບຽບຂອງທັນຕະແພດ, ການປັບປຸງປ່ຽນແປງໃໝ່ດ້ານເຕັກໂນໂລຢີການແພດທີ່ໄດ້ປະສົບຜົນສຳເລັດ ຫຼື ເກີດມີການປ່ຽນແປງດ້ານໂຄງສ້າງທາງສັງຄົມ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງ.

## II. ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂອບເຂດການປະຕິບັດງານ (Scope of Practice/SOP) ສະບັບນີ້ ມີຄວາມໝາຍ ດັ່ງລຸ່ມນີ້:

1. **ທັນຕະແພດທົ່ວໄປ (General Dentist Practitioner)** ແມ່ນ ຜູ້ທີ່ໄດ້ສຳເລັດການສຶກສາລະດັບປະລິນຍາຕີ ຈາກສະຖາບັນການສຶກສາ ທີ່ຖືກຮັບຮູ້ໂດຍກະຊວງສາທາລະນະສຸກ/ສະພາຄຸ້ມຄອງວິຊາຊີບປິ່ນປົວ ພາຍຫຼັງໄດ້ຮັບຜົນສຳເລັດໃນການອົບຮົມ ແລະ ມີປະສົບການທາງດ້ານຄລີນິກ ຖືວ່າເປັນນັກວິຊາການທີ່ມີຄຸນນະພາບທາງດ້ານການບໍລິການສຸຂະພາບ.
2. **ທັນຕະແພດສະເພາະທາງ/ຊ່ຽວຊານດ້ານທັນຕະກຳ (Dental Specialist)** ແມ່ນ ຜູ້ທີ່ສຳເລັດການສຶກສາໃນລະດັບປະລິນຍາຕີແລ້ວໄປສຶກສາຕໍ່ສະເພາະທາງ ໃຫ້ມີຄວາມສຳນານງານທາງດ້ານຄລີນິກທີ່ຕ້ອງການ.

3. **ຜູ້ຊ່ຽວຊານທາງດ້ານທັນຕະກຳພາຍໃຕ້ການດູແລຂອງກະຊວງສາທາລະນະສຸກ** ແມ່ນ ຜູ້ທີ່ສຳເລັດການສຶກສາໃນລະດັບປະລິນຍາຕີ ແລ້ວໄປຍົກລະດັບສະເພາະສາຂາວິຊາ ແຕ່ຍັງບໍ່ບັນລຸປະສົບການທາງດ້ານຄລີນິກທີ່ຕ້ອງການເທົ່າທີ່ຄວນເທື່ອ. ຢ່າງໃດກໍຕາມ, ກະຊວງສາທາລະນະສຸກ/ສະພາຄຸ້ມຄອງວິຊາຊີບປິ່ນປົວ ຍັງບໍ່ໄດ້ຮັບຮອງໃນລະດັບຊ່ຽວຊານ.
4. **ຂອບເຂດການປະຕິບັດງານຂອງທັນຕະແພດທົ່ວໄປ** ແມ່ນ ໄດ້ກຳນົດຄວາມສາມາດ ທີ່ໃຫ້ການບໍລິການດ້ານສຸຂະພາບປາກ ແລະ ແຂ້ວ (ຕາມສະຖານທີ່ຂອງການປະຕິບັດງານ) ແລະ ການປະຕິບັດງານນັ້ນສາມາດເຮັດໄດ້ຢ່າງອິດສະລະໃນພະຍາດ, ການເຈັບປ່ວຍ ແລະ ການບາດເຈັບທີ່ທັນຕະແພດສາມາດແກ້ໄຂໄດ້.
5. **ຂອບເຂດການປະຕິບັດງານຂອງຜູ້ຊ່ຽວຊານທາງດ້ານທັນຕະກຳພາຍໃຕ້ການດູແລຂອງກະຊວງສາທາລະນະສຸກ** ຄືກັນກັບທັນຕະແພດສະເພາະທາງ, ແຕ່ຈະປະຕິບັດພາຍໃຕ້ການດູແລໂດຍກົງຂອງທັນຕະແພດສະເພາະທາງ.

## III. ສະຖານທີ່ບໍລິການສຸຂະພາບທີ່ອະນຸຍາດໃຫ້ປະຕິບັດງານ

ທັນຕະແພດທີ່ໄດ້ຮັບໃບອະນຸຍາດປະກອບວິຊາຊີບປິ່ນປົວ ຈາກກະຊວງສາທາລະນະສຸກ/ສະພາຄຸ້ມຄອງວິຊາຊີບປິ່ນປົວ ສາມາດປະຕິບັດໜ້າທີ່ຢູ່ໃນສະຖານທີ່ບໍລິການສຸຂະພາບ ດັ່ງລຸ່ມນີ້:

1. ໂຮງໝໍສູນກາງ ແລະ ສູນປິ່ນປົວສະເພາະ (ສະຖານທີ່ບໍລິການປິ່ນປົວຂອງລັດ ຂັ້ນ ສູງສຸດ);
2. ໂຮງໝໍພາກ, ໂຮງໝໍແຂວງ (ສະຖານທີ່ບໍລິການປິ່ນປົວຂອງລັດ ຂັ້ນ ສູງ);
3. ໂຮງໝໍເມືອງ ຫຼື ໂຮງໝໍຊຸມຊົນ (ສະຖານທີ່ບໍລິການປິ່ນປົວຂອງລັດ ຂັ້ນກາງ);
4. ສຸກສາລາ ຫຼື ໂຮງໝໍນ້ອຍ (ສະຖານທີ່ບໍລິການປິ່ນປົວຂອງລັດ ຂັ້ນຕົ້ນ);
5. ໂຮງໝໍເອກະຊົນ ແລະ ຫ້ອງກວດພະຍາດເອກະຊົນ.

## IV. ຂອບເຂດການປະຕິບັດງານຂອງທັນຕະແພດທົ່ວໄປ (ລະອຽດເບິ່ງຕາມເອກະສານຊ້ອນທ້າຍ 1)

ພາຍໃຕ້ຄວາມສາມາດ (ຄວາມຮູ້+ທັກສະ+ທັດສະນະຄະຕິ) ແລະ ປະສົບການຂອງຕົນ, ທັນຕະແພດທີ່ໄດ້ຮັບອະນຸ ຍາດໃຫ້ປະກອບວິຊາຊີບປິ່ນປົວ ມີສິດປະຕິບັດດັ່ງນີ້:

1. ອົງປະກອບ I:
   - **ຂະບວນການທັກສະດ້ານຄລີນິກ:**
     - ກວດຄັດແຍກ ແລະ ປະເມີນຄົນເຈັບ;
     - **ວັດແທກອາການຊີບ:** ການວັດແທກອຸນຫະພູມ, ຊີບພະຈອນ, ອັດຕາການຫາຍໃຈ ແລະ ຄວາມດັນເລືອດ;
     - **ສອບຖາມປະຫວັດ:** ປະຫັວດພະຍາດ, ບັນທຶກຂໍ້ມູນດ້ານທັນຕະກຳ, ດ້ານການແພດ, ຄອບຄົວ, ສັງຄົມ, ຍາດພີ່ນ້ອງ ຫຼື ການເຮັດວຽກງານອື່ນໆ ຂອງຄົນເຈັບຕາມຄວາມເໝາະສົມ ໂດຍລະອຽດ ແລະ ທົ່ວເຖິງ.

- **ການກວດກາຕົວຈິງ:** ກວດໃບໜ້າ, ຄໍ, ກວດຜົ້ງປາກ ແລະ ແຂ້ວ ຢ່າງລະອຽດເປັນລະບົບ ແລະ ມີປະສິດທິພາບສູງ.

  ທັນຕະແພດກວດຄົນເຈັບ ແລະ ບົ່ງມະຕິພະຍາດຕາມຂັ້ນຕອນດ້ວຍຄວາມປອດໄພ ແລະ ມີປະສິດທິຜົນ ພ້ອມບັນທຶກຜົນຂອງການກວດພົບ.
- **ການກວດເພີ່ມອື່ນໆ:**
  - ➢ ສັ່ງກວດຕໍາລາເລືອດ;
  - ➢ ສັ່ງກວດວັດແທກນໍ້າຕານໃນເລືອດ ແລະ ແປຜົນ;
  - ➢ ສັ່ງກວດ ແລະ ອ່ານຜົນການກວດຈາກຫ້ອງວິເຄາະ;
  - ➢ ສັ່ງກວດລັງສີຂອງຄາງກະໄຕ-ແຂ້ວ;
  - ➢ ອ່ານ ແລະ ແປຜົນຮູບພາບລັງສີຂອງຄາງກະໄຕ-ແຂ້ວ;
  - ➢ ເກັບຕົວຢ່າງສິ່ງປູກເຊື້ອ ແລະ ລອງຢາ (Antibiogram);
  - ➢ ຕັດເນື້ອເຍື່ອສົ່ງກວດ;
  - ➢ ເກັບຕົວຢ່າງອື່ນໆ ແລະ ລວມເຖິງການກະກຽມສະຫຼຸບຜົນການກວດຄົນເຈັບ.

- **ການບົ່ງມະຕິ:**

  **ທັນຕະແພດ:**
  - ➢ ແປຜົນຂອງການກວດພົບຈາກການສອບຖາມປະຫວັດ ແລະ ການກວດກາຕົວຈິງ;
  - ➢ ປະເມີນເບື້ອງຕົ້ນກ່ຽວກັບບັນຫາຂອງຄົນເຈັບ ແລະ ບົ່ງມະຕິຈໍາແນກຕ່າງໆ;
  - ➢ ດໍາເນີນການກວດເພີ່ມອື່ນໆ ເມື່ອມີຄວາມຈໍາເປັນ;
  - ➢ ສັງລວມການປະເມີນບັນຫາຂອງຄົນເຈັບ ແລະ ບົ່ງມະຕິທີ່ອາດເປັນໄປໄດ້.

  **ຕົວຢ່າງ:** Apical granuloma

  **ການປິ່ນປົວ:** ປິ່ນປົວຮູຮາກ ຫຼື ຕັດປາຍຮາກ (Apical resection)
- **ແຜນການປິ່ນປົວ:**

  **ທັນຕະແພດ:**
  - ➢ ຕັດສິນທາງດ້ານຄລີນິກ ໂດຍພິຈາລະນາຈາກຫຼັກຖານທີ່ມີຢູ່, ຮ່ວມກັບເພື່ອນຮ່ວມງານ ແລະ ຜູ້ມີປະສົບການຕາມຄວາມເໝາະສົມ;
  - ➢ ວາງແຜນການປິ່ນປົວ, ບໍລິຫານຄຸ້ມຄອງ, ນັດຄົນເຈັບຕາມຫຼັກການ ແລະ ເຫດຜົນໂດຍຮ່ວມມືກັບຄົນເຈັບ ແລະ ຜູ້ຊ່ຽວຊານດ້ານສຸຂະພາບອື່ນໆຕາມຄວາມເໝາະສົມ;
  - ➢ ແກ້ໄຂຄວາມກັງວົນ, ສ້າງຄວາມພໍໃຈ, ໄດ້ຮັບຄວາມຍິນຍອມ ແລະ ເຄົາລົບສິດທິຄົນເຈັບ ເພື່ອບັນລຸຜົນໃນການຕັດສິນໃຈກ່ຽວກັບການປິ່ນປົວ.
- **ບັນທຶກ ແລະ ເກັບມ້ຽນເອກະສານ:** ການປິ່ນປົວຄົນເຈັບ ແລະ ປະເມີນຜົນຢ່າງຕໍ່ເນື່ອງ, ຊັດເຈນຖືກຕ້ອງ, ຄົບຖ້ວນ ແລະ ຕາມກໍານົດເວລາ.

2. ອົງປະກອບ II:

- **ການບໍລິຫານຈັດການກັບພະຍາດຂອງຄົນເຈັບ**

  **ກ. ການບໍລິຫານຄຸ້ມຄອງຄົນເຈັບທົ່ວໄປ:**

1. ທັນຕະແພດ ໃຊ້ຫຼັກການທົ່ວໄປ ໃນການດູແລສຸຂະພາບຜົ້ງປາກ ເພື່ອການບໍລິຫານຄຸ້ມຄອງຄົນເຈັບຕາມທີ່ໄດ້ລະບຸໄວ້ໃນ **ເອກະສານຊ້ອນທ້າຍທີ 1.**
2. ທັນຕະແພດ ຕ້ອງໃຫ້ການປິ່ນປົວທັນທີໃນກໍລະນີສຸກເສີນທາງດ້ານທັນຕະກຳ ແລະ ທາງດ້ານການແພດ:
   - ປະເມີນ ແລະ ຮັບຮູ້ເຖິງຄວາມຮຸນແຮງຂອງການສະແດງອອກທາງດ້ານຄລີນິກ ແລະ ຄວາມຕ້ອງການປິ່ນປົວສຸກເສີນໃນທັນທີທັນໃດ;
   - ບົ່ງມະຕິ ແລະ ຄຸ້ມຄອງກໍລະນີສຸກເສີນທາງດ້ານທັນຕະກຳ ແລະ ທາງດ້ານການແພດ;
   - ໃຫ້ການປະຖົມພະຍາບານຂັ້ນພື້ນຖານ;
   - ຊ່ວຍກອບກູ້ຊີວິດຂອງຄົນເຈັບຢ່າງທັນການ;
   - ໃຫ້ການຊ່ວຍເຫຼືອຟື້ນຟູຊີບ ແກ່ຄົນເຈັບທີ່ມີບັນຫາທາງດ້ານຫົວໃຈ ແລະ ປອດ (cardio-pulmonary Resuscitation).
3. ທັນຕະແພດ**ສັ່ງຢາ**ໄດ້ຢ່າງປອດໄພ, ມີປະສິດທິຜົນ ແລະ ປະຢັດ.
   - ສອບຖາມປະຫວັດການໃຊ້ຢາທີ່ຜ່ານມາໃຫ້ຊັດເຈນ, ລວມທັງຢາທີ່ໄດ້ໃຫ້ໄປກ່ອນ ແລະ ຢາປິ່ນປົວອື່ນໆ;
   - ວາງແຜນການປິ່ນປົວ ດ້ວຍຢາຢ່າງສົມເຫດສົມຜົນ ສຳລັບພະຍາດໃນຜົ້ງປາກຊະນິດທີ່ພົບເລື້ອຍໆລວມທັງອາການເຈັບປວດແລະການຕິດເຊື້ອ;
   - ຂຽນໃບສັ່ງຢາຢ່າງປອດໄພ ແລະ ຖືກຕ້ອງຕາມກົດໝາຍ;
   - ຄິດໄລ່ປະລິມານຢາທີ່ເໝາະສົມ ແລະ ບັນທຶກຜົນທີ່ໄດ້ຮັບຢ່າງຖືກຕ້ອງ;
   - ໃຫ້ຄົນເຈັບຮູ້ຂໍ້ມູນຢ່າງເໝາະສົມກ່ຽວກັບຢາທີ່ໃຊ້ ຕິດຕາມຜົນໄດ້ຮັບ ແລະ ລາຍງານຜົນຂ້າງຄຽງຂອງຢາ.
4. ທັນຕະແພດ ປະຕິບັດວິທີການປິ່ນປົວທີ່ເໝາະສົມ, ຕາມທີ່ລະບຸໄວ້ໃນ **ເອກະສານຊ້ອນທ້າຍ** 1.
5. ທັນຕະແພດ ຕ້ອງໃຊ້ທຸກວິທີການໃນການຕິດຕໍ່ກັບຄົນເຈັບເພື່ອໃຫ້ສຸຂະສຶກສາ, ປ້ອງກັນພະຍາດ ແລະ ສົ່ງເສີມສຸຂະພາບໃນຜົ້ງປາກ.

ຂ. ການຄຸ້ມຄອງຄົນເຈັບສະເພາະສາຂາວິຊາ:

1. ອາຍຸລະສາດພື້ງປາກ (Oral Medicine)

ການປະຕິບັດໜ້າທີ່ໃນຄລີນິກອາຍຸລະສາດພື້ງປາກ, ທັນຕະແພດຕ້ອງກຳນົດໃຫ້ໄດ້ບັນຫາອາຍຸລະສາດພື້ງປາກທີ່ພົບເຫັນເລື້ອຍໆ, ອາການສົນ, ຢາທີ່ໃຊ້ປິ່ນປົວ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີໄດ້ຢ່າງເໝາະສົມ.

2. ສັນລະຍະກຳພື້ງປາກ (Oral Surgery)

ການປະຕິບັດໜ້າທີ່ໃນຄລີນິກສັນລະຍະກຳພື້ງປາກ, ທັນຕະແພດຕ້ອງຮູ້ຂໍ້ບົ່ງຊີ້ໃນການເຮັດສັນລະຍະກຳ ແລະ ການຜ່າຕັດຢູ່ບໍລິເວນພື້ງປາກທີ່ເໝາະສົມ, ໃຫ້ກຳໄດ້ບັນຫາໃນການຜ່າຕັດພື້ງປາກທີ່ພົບພໍ້ເລື້ອຍໆ, ອາການສົນ, ພ້ອມຢາປິ່ນປົວ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງເໝາະສົມ ທັງກ່ອນ, ຂະນະທີ່ ແລະ ຫຼັງການຜ່າຕັດ.

3. ທັນຕະກຳເດັກ (Pediatric Dentistry)

ການປະຕິບັດໜ້າທີ່ໃນຄລີນິກທັນຕະກຳເດັກ, ທັນຕະແພດຕ້ອງກຳໃຫ້ໄດ້ບັນຫາດ້ານສຸຂະພາບພື້ງປາກທົ່ວໄປຂອງເດັກ, ພ້ອມດ້ວຍອາການສົນ, ຢາທີ່ໃຊ້ໃນການປິ່ນປົວ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບ ໄດ້ຢ່າງເໝາະສົມ.

4. ທັນຕະກຳດັດແປງ (Orthodontics)

ການປະຕິບັດໜ້າທີ່ໃນຄລີນິກທັນຕະກຳດັດແປງ, ທັນຕະແພດຕ້ອງກຳໃຫ້ໄດ້ບັນຫາກ່ຽວກັບທັນຕະກຳດັດແປງໂດຍທົ່ວໄປ (Orthodontic), ອາການສົນ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງເໝາະສົມ.

5. ການປິ່ນປົວຮູຮາກແຂ້ວ (Endodontics)

ການປະຕິບັດໜ້າທີ່ໃນຄລີນິກປິ່ນປົວຮູຮາກແຂ້ວ (Endodontics), ທັນຕະແພດຕ້ອງກຳບັນຫາໃນການປິ່ນປົວຮູຮາກແຂ້ວໂດຍທົ່ວໄປໃຫ້ໄດ້, ອາການສົນ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງເໝາະສົມ.

6. ທັນຕະກຳບູລະນະ (Restorative Dentistry)

ການປະຕິບັດໜ້າທີ່ໃນຄລີນິກທັນຕະກຳບູລະນະ, ທັນຕະແພດຕ້ອງກຳບັນຫາການບູລະນະແຂ້ວທົ່ວໄປໃຫ້ໄດ້, ອາການສົນ, ການໃຫ້ຢາປິ່ນປົວແກ້ໄຂບັນຫາຕ່າງໆ ພ້ອມໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງເໝາະສົມ.

7. ແຂ້ວທຽມຕິດແໜ້ນ ແລະ ເຄື່ອນທີ່ (Fixed and Removable Prosthodontics)

ການປະຕິບັດໜ້າທີ່ໃນຄລີນິກແຂ້ວທຽມ (Prosthodontics), ທັນຕະແພດຕ້ອງກຳບັນຫາທົ່ວໄປຂອງແຂ້ວທຽມ, ອາການແຊກຊ້ອນທີ່ຕ້ອງແກ້ໄຂ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງເໝາະສົມ.

8. ປະຣິທັນວິທະຍາ (Periodontics)

ການປະຕິບັດໜ້າທີ່ໃນຄລີນິກປະຣິທັນ ທັນຕະແພດຕ້ອງກຳບັນຫາຂອງພະຍາດປະຣິທັນໂດຍທົ່ວໄປ, ອາການສິນທີ່ເກີດຂຶ້ນ, ການແກ້ໄຂ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງໝາະສົມ.

9. **ທັນຕະກຳປ້ອງກັນ ແລະ ທັນຕະກຳຊຸມຊົນ (Preventive and Community Dentistry)**
ການປະຕິບັດໜ້າທີ່ໃນຄລີນິກທັນຕະກຳປ້ອງກັນ ແລະ ທັນຕະກຳຊຸມຊົນ ທັນຕະແພດຕ້ອງຮູ້ກຳນົດສາເຫດພ້ອມປັດໃຈສ່ຽງຕ່າງໆ ແລະ ໃຫ້ການປ້ອງກັນຕາມກໍລະນີໄດ້ຢ່າງເໝາະສົມ.

10. **ຄົນເຈັບພິເສດ (Special Care Patients)**
ການປິ່ນປົວດູແລຄົນເຈັບທີ່ມີບັນຫາທາງດ້ານຮ່າງກາຍ, ດ້ານການພັດທະນາການ, ບັນຫາສຸຂະພາບຈິດ ຫຼື ບັນຫາທາງດ້ານການແພດ/ພິການ ທັນຕະແພດຕ້ອງກຳໃຫ້ໄດ້ບັນຫາທີ່ພົບພໍ້ເລື້ອຍໆ, ຄວາມສັບສົນ ແລະ ໃຫ້ການບໍລິຫານຄຸ້ມຄອງກໍລະນີຄົນເຈັບໄດ້ຢ່າງເໝາະສົມ.

**ເນື້ອໃນຄວາມສາມາດຂອງການບໍລິຫານຈັດການຄຸ້ມຄອງຄົນເຈັບ** ໃນຄລີນິກອາຍຸລະສາດພົ້ງປາກ (Oral Medicine), ສັນລະຍະກຳພົ້ງປາກ (Oral Surgery), ທັນຕະກຳເດັກ (Pediatric Dentistry), ທັນຕະກຳດັດແປງແຂ້ວ (Orthodontics), ການປິ່ນປົວຮູຮາກແຂ້ວ (Endodontics), ແຂ້ວທຽມວິທະຍາ (Prosthodontics), ພະຍາດປະຣິທັນ (Periodontics), ທັນຕະກຳປ້ອງກັນ ແລະ ທັນຕະກຳຊຸມຊົນ (Preventive and community Dentistry) ແລະ ການປິ່ນປົວຄົນເຈັບພິເສດ (Special Care Patients) **ແມ່ນຢູ່ໃນເອກະສານຊ້ອນທ້າຍທີ 2.**

## V. <u>ຄວາມສາມາດ ຫຼືຄວາມເປັນມືອາຊີບທາງດ້ານວິຊາຊີບ ແລະທັກສະທົ່ວໄປ (Professionalism and General Skills)</u>

**(ບົດບາດຂອງທັນຕະແພດຄືນັກວິຊາການມືອາຊີບ)**

**ທັນຕະແພດ ຕ້ອງມີຄວາມສາມາດ ດັ່ງນີ້:**

1. ນຳໃຊ້ຫຼັກການຈັນຍາບັນ ແລະ ນິຕິກຳດ້ານກົດໝາຍ ເຂົ້າໃນການປະຕິບັດວຽກງານດ້ານທັນຕະກຳ;
2. ໃຫ້ການປິ່ນປົວດ້ວຍຄວາມເອົາໃຈໃສ່ແກ່ຄົນເຈັບທຸກຄົນໂດຍເທົ່າທຽມກັນ;
3. ເຄົາລົບສິດ ແລະ ສິດທິຂອງຄົນເຈັບ;
4. ຕັດສິນໃຈໃຫ້ການປິ່ນປົວທາງທັນຕະກຳໂດຍມີເອກະສານວິທະຍາສາດ ແລະ ແຫຼ່ງຂໍ້ມູນອື່ນໆອ້າງອີງ;
5. ປະຕິບັດຕາມກົດໝາຍ/ຂໍ້ກຳນົດຂອງກະຊວງສາທາລະນະສຸກ/ສະພາຄຸ້ມຄອງວິຊາຊີບປິ່ນປົວ;
6. ໃຫ້ຄຳອະທິບາຍຢ່າງແຈ່ມແຈ້ງກ່ຽວກັບຂັ້ນຕອນການກວດພະຍາດ, ການບົ່ງມະຕິ, ການປິ່ນປົວ, ຜົນປະໂຫຍດ, ຄວາມສ່ຽງ ແລະ ທາງເລືອກຂອງຄົນເຈັບ;

7. ປະຕິບັດໜ້າທີ່ພາຍໃຕ້ຂອບເຂດຄວາມສາມາດ ແລະ ປຶກສາຫາລື ຫຼື ສົ່ງຕໍ່ຫາເພື່ອນຮ່ວມງານຜູ້ທີ່ມີຄວາມຊໍານານສູງກ່ວາໃນເວລາທີ່ມີຄວາມຈໍາເປັນ.

## VI. ທັກສະໃນການສື່ສານ ແລະ ຄວາມມີມະນຸດສໍາພັນ

(ບົດບາດຂອງທັນຕະແພດຄືຜູ້ສື່ສານດ້ານສຸຂະພາບ)

ທັນຕະແພດ ຕ້ອງມີຄວາມສາມາດ ດັ່ງນີ້:

1. ນໍາໃຊ້ທັກສະໃນການສື່ສານ ແລະ ຄວາມມີມະນຸດສໍາພັນທີ່ດີຢ່າງເໝາະສົມ ເຂົ້າໃນການປະຕິບັດວຽກງານປະຈໍາວັນ;
2. ສື່ສານ (ດ້ວຍວາຈາ ແລະ ເປັນລາຍລັກອັກສອນ) ໄດ້ຢ່າງມີປະສິດທິຜົນກັບຄົນເຈັບ, ກັບຜູ້ຮ່ວມວິຊາອື່ນໆ, ພະນັກງານ ແລະ ສາທາລະນະຊົນຢ່າງກວ້າງຂວາງ;
3. ນໍາໃຊ້ຫຼັກການທາງຈິດຕະວິທະຍາ-ສັງຄົມ ແລະ ພຶດຕິກໍາໃນການດູແລສຸຂະພາບຂອງຄົນເຈັບເປັນໃຈກາງ;
4. ນໍາໃຊ້ຫຼັກການ ແລະ ມາດຕະຖານດ້ານຈັນຍາບັນ ເຊັ່ນ: ຫຼັກການຄວາມໝັ້ນໃຈ, ຄວາມຖືກຕ້ອງ ແລະ ຄວາມຊື່ສັດໃນການປະຕິບັດວຽກງານປະຈໍາວັນ.

## VII. ການບໍລິຫານວຽກງານ ແລະ ຂໍ້ມູນຂ່າວສານ (Practice Management and Information)

(ບົດບາດຂອງທັນຕະແພດຄືຜູ້ບໍລິຫານງານດ້ານສຸຂະພາບ)

ທັນຕະແພດ ຕ້ອງມີຄວາມສາມາດ:

1. ປະເມີນຜູ້ໃຫ້ການປິ່ນປົວ, ສະຖານທີ່ປະຕິບັດງານ ແລະ ກົນໄກໃນການຊໍາລະເງິນຄືນ;
2. ສຶກສາອົບຮົມແນວທາງນະໂຍບາຍຂອງພັກ-ລັດ, ກົດໝາຍ, ຂໍ້ກໍານົດ, ກົດລະບຽບ ແລະ ຄວາມຮັບຜິດຊອບດ້ານວິຊາຊີບໃຫ້ແກ່ພະນັກງານ ແລະ ເພື່ອນຮ່ວມວິຊາຊີບ;
3. ເກັບມ້ຽນບົດບັນທຶກ ແລະ ເອກະສານຂອງຄົນເຈັບ;
4. ປະສານສົມທົບ ແລະ ໃຫ້ຄໍາປຶກສາວຽກງານການສົ່ງເສີມທັນຕະສຸຂະພາບແກ່ເພື່ອນຮ່ວມງານ;
5. ບໍລິຫານຈັດການດ້ານທັນຕະກໍາ ຢ່າງມີປະສິດທິຜົນດ້ວຍການຂຶ້ນຕາຕະລາງ, ເກັບຮັກສາເອກະສານ-ຂໍ້ມູນທີ່ບັນທຶກແລ້ວ, ການຊໍາລະເງິນຄືນ ແລະ ຈັດສັນງົບປະມານ;
6. ຈັດຕັ້ງປະຕິບັດ, ຄວບຄຸມການແຜ່ເຊື້ອ ແລະ ຮັກສາສິ່ງແວດລ້ອມຕາມມາດຕະຖານ;
7. ປະຕິບັດໜ້າທີ່ຕາມຄວາມສາມາດຂອງຕົນ ແລະ ຂໍຄໍາປຶກສາ ຫຼື ສົ່ງຕໍ່ໃຫ້ເພື່ອນຮ່ວມວິຊາຊີບຜູ້ທີ່ມີຄວາມຊ່ຽວຊານສະເພາະ;
8. ນໍາໃຊ້ເທັກໂນໂລຍີຂໍ້ມູນຂ່າວສານ, ລະບົບບໍລິຫານຂໍ້ມູນເຂົ້າໃນການປິ່ນປົວຄົນເຈັບ, ການບໍລິຫານ ແລະ ການພັດທະນາວິຊາຊີບ.

## VIII. ການສົ່ງເສີມສຸຂະພາບຜົ້ງປາກ (Oral Health Promotion)

(ບົດບາດຂອງທັນຕະແພດຄືຜູ້ສົ່ງເສີມສຸຂະພາບຜົ້ງປາກ)

*ທັນຕະແພດຕ້ອງມີຄວາມສາມາດ:*

1. ສ້າງຍຸດທະສາດໃນການກັນພະຍາດ, ສຸຂະສຶກສາ ແລະ ດໍາເນີນການປະຕິບັດຕົວຈິງ;
2. ປະກອບສ່ວນກັບທີມງານທັນຕະກໍາ ແລະ ພະນັກງານວິຊາຊີບສາທາລະນະສຸກອື່ນໆ ໃນການບໍລິຫານ ແລະ ສົ່ງເສີມສຸຂະພາບເພື່ອປະຊາຊົນທຸກຖ້ວນໜ້າ;
3. ຍອມຮັບການປິ່ນປົວແບບພື້ນເມືອງ ເພື່ອເຮັດໃຫ້ສຸຂະພາບຜົ້ງປາກດີຂຶ້ນ;
4. ໃຫ້ທັນຕະສຸຂະສຶກສາແກ່ຄົນເຈັບ ແລະ ຊຸມຊົນຢ່າງກວ້າງຂວາງ.

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2019

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ດຣ ປອນເມກ ດາລາລອຍ

# ເອກະສານຊ້ອນທ້າຍ 1
# ຂອບເຂດປະຕິບັດງານສຳລັບທັນຕະແພດທົ່ວໄປ

ທັນຕະແພດທົ່ວໄປ **(General Dentist/GD)**

* **ຄວາມໝາຍ:** ແມ່ນຜູ້ປະກອບວິຊາຊີບປິ່ນປົວທີ່ສາມາດປະເມີນ, ບົ່ງມະຕິ, ປ້ອງກັນ, ປິ່ນປົວພະຍາດ, ຄວາມບົກຜ່ອງ ຫຼື ເງື່ອນໄຂທີ່ເປັນພະຍາດອື່ນໆໃນຜົ້ງປາກ (ແບບບໍ່ຜ່າຕັດ, ຜ່າຕັດ ຫຼື ວິທີການອື່ນໆທີ່ກ່ຽວຂ້ອງ) ພາຍໃຕ້ຂອບເຂດທີ່ຕົນໄດ້ສຶກສາ, ຝຶກອົບຮົມ ແລະ ໄດ້ມີປະສົບການຜ່ານມາ.
* **ຄວາມສາມາດຫຼັກ:**
  **ທັນຕະແພດທົ່ວໄປ ຕ້ອງມີຄວາມສາມາດ ດັ່ງລຸ່ມນີ້:**

1. ບໍລິຫານຈັດການສຸຂະພາບຜົ້ງປາກຂອງເດັກນ້ອຍ, ໄວໜຸ່ມ, ຜູ້ໃຫຍ່, ແມ່ຍິງ, ຜູ້ເຖົ້າແລະຄົນເຈັບພິເສດ.
2. ປ້ອງກັນ, ກຳນົດ, ປິ່ນປົວການກະທົບ, ພະຍາດຜົ້ງປາກ ແລະ ຄວາມຜິດປົກກະຕິອື່ນໆ ໃນບໍລິເວນຜົ້ງປາກ-ຄາງກະໄຕ ແລະ ໃບໜ້າ;
3. ລວບລວມ, ແປຜົນຂໍ້ມູນຄົນເຈັບ/ຂໍ້ມູນການແພດ, ລວມທັງການກວດໃນ/ນອກຜົ້ງປາກຢ່າງລະອຽດ ແລະ ນຳໃຊ້ຂໍ້ມູນທີ່ພົບເພື່ອປະເມີນ ແລະ ປິ່ນປົວຄົນເຈັບຢ່າງຖືກຕ້ອງ;
4. ຮູ້ການສະແດງອອກຂອງພະຍາດທາງລະບົບ ແລະ ຜົນກະທົບຂອງພະຍາດດັ່ງກ່າວ ພ້ອມການບໍລິຫານຄຸ້ມຄອງກ່ຽວກັບການໃຫ້ການປິ່ນປົວທາງທັນຕະກຳ;
5. ບົ່ງມະຕິພະຍາດ, ປິ່ນປົວ ແລະ/ຫຼື ສົ່ງຕໍ່ຄົນເຈັບໄດ້ຢ່າງຖືກຕ້ອງ;
6. ປະເມີນ, ເລືອກວິທີການປິ່ນປົວທີ່ເໝາະສົມໂດຍສອດຄ່ອງກັບການບົ່ງມະຕິ, ການປິ່ນປົວ ແລະ ການພິຈາລະນາຄົນເຈັບ (ເຊັ່ນ: ສຸຂະພາບທາງຈິດ ແລະ ສຸຂະພາບທາງການແພດ, ຄວາມຫຍຸ້ງຍາກໃນການກວດທາງລັງສີ, ຄວາມຫຍຸ້ງຍາກທາງດ້ານຮ່າງກາຍ);
7. ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
8. ບົ່ງມະຕິ ແລະ ໃສ່ຢາມືນສະເພາະທີ່ດ້ວຍວິທີການອື່ນໆທີ່ກ່ຽວຂ້ອງກັບແຂ້ວ ແລະ ເນື້ອເຍື່ອອ່ອນທີ່ຢູ່ອ້ອມຮອບແຂ້ວ ຫຼື ຄ້ຳຊູແຂ້ວ;
9. ສັ່ງກວດພິເສດອື່ນໆທີ່ກ່ຽວຂ້ອງກັບການປິ່ນປົວທາງທັນຕະກຳໃນເມື່ອມີຄວາມຈຳເປັນ;
10. ບົ່ງມະຕິ ແລະ ໃຫ້ການປິ່ນປົວ ຄວາມບົກຜ່ອງຂອງຂໍ້ຕໍ່ຄາງກະໄຕໃບໜ້າ (Temporo-Mandibular Joint/TMJ Disorders) ແບບບໍ່ຜ່າຕັດ;
11. ໃສ່ເຄື່ອງມືປ້ອງກັນຫ່ວາງແຂ້ວ (Passive Space Maintainers) ເມື່ອມີຄວາມຈຳເປັນ;
12. ປິ່ນປົວນອນແຂ້ວດ້ວຍການຮຳບາດນອນແຂ້ວ ແລະ ການປິ່ນປົວຮູຮາກດ້ວຍວິທີການທີ່ເໝາະສົມ;
13. ຕັດເນື້ອແຂ້ວອອກ ແລະ/ອັດດ້ວຍວັດສະດຸຊົ່ວຄາວ ຫຼື ຖາວອນ ເພື່ອຈຸດປະສົງບູລະນະ, ທົດແທນໂຄງສ້າງ ຫຼື ຟື້ນຟູໜ້າທີ່ການຂອງແຂ້ວ;

14. ດຳເນີນວິທີການໃດໜຶ່ງ ເພື່ອຈຸດປະສົງໃນການບູລະນະ, ການປັບດັດ (Fitting), ການປັບປຸງ (Adjustment), ການບູລະນະ ຫຼື ໃສ່ແຂ້ວທຽມ ຫຼື ປັບເຄື່ອງມືສ່ວນອື່ນໆຂອງແຂ້ວທຽມ;

15. ຖອນແຂ້ວ ແລະ ທຳການຜ່າຕັດນ້ອຍ ເຊັ່ນ: ຕັດຊິ້ນສ່ວນສິ່ງກວດ ແລະ ເຈາະລະບາຍຕາມກໍລະນີທີ່ເໝາະສົມ;

16. ສັ່ງຢາຢ່າງເໝາະສົມຕາມຂອບເຂດປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

16.1 ສັ່ງຢາທີ່ຄວບຄຸມ ຫຼື ຢາເສບຕິດ (CD-A) ໄດ້ພຽງ 3 ວັນເທົ່ານັ້ນ. ການສັ່ງຢາດັ່ງກ່າວ ຕ້ອງຢູ່ໃນພະແນກສຸກເສີນຂອງໂຮງໝໍເທົ່ານັ້ນ;

16.2 ໃຫ້ຢາເຄິ່ງຄວບຄຸມ (CD-B) ເທົ່າກັບ 30 ມື້ໂດຍບໍ່ມີການເພີ່ມຕື່ມ.

17. ສົ່ງເສີມສຸຂະພາບຜົ້ງປາກ ແລະ ປ້ອງກັນພະຍາດ;

18. ຖ້າຫາກວ່າລະດັບຄວາມຫຍຸ້ງຍາກເກີນກວ່າປະສົບການຂອງຕົນ, ທັນຕະແພດ ຕ້ອງໄດ້ສົ່ງຕໍ່ໄປຫາທັນຕະແພດຜູ້ທີ່ຊ່ຽວຊານ.

**ໝາຍເຫດ:**

1) ການຝັງຮາກແຂ້ວທຽມ (Implantology) ຈະບໍ່ໄດ້ອະນຸຍາດໃຫ້ປະຕິບັດ ເວັ້ນເສຍແຕ່ວ່າທັນຕະແພດທົ່ວໄປຜູ້ນັ້ນ ໄດ້ເຂົ້າຮ່ວມການຝຶກອົບຮົມ ແລະ ການປະເມີນຜົນຢ່າງເປັນທາງການ;

2) ຂົງເຂດໃນການປະຕິບັດທີ່ບໍ່ມີຢູ່ໃນຫຼັກສູດການສຶກສາ ຫຼື ການຝຶກອົບຮົມຂອງທັນຕະແພດທົ່ວໄປທີ່ຈະໄດ້ກ່າວຂ້າງລຸ່ມນີ້ ຈະບໍ່ອະນຸຍາດໃຫ້ທັນຕະແພດທົ່ວໄປປະຕິບັດ:
   - ການດັດແປງແຂ້ວ ລວມທັງການຈັດຕຳແໜ່ງທີ່ຊັດເຈນ (Clear Aligners);
   - ການຜ່າຕັດຄາງກະໄຕ-ໃບໜ້າ (Maxillo-Facial Surgery) ຍົກເວັ້ນການຜ່າຕັດແຂ້ວຝັງໃນ (Impactions);
   - ການຜ່າຕັດຕົບແຕ່ງເສີມຄວາມງາມຢູ່ບໍລິເວນໃບຫນ້າລວມທັງການສັກ Botox ແລະ ສານເຕີມເຕັມ (Fillers).

## ເອກະສານຊ້ອນທ້າຍ 2
## ຂອບເຂດໃນການປະຕິບັດງານທາງດ້ານທັນຕະກຳສະເພາະສາຂາວິຊາ

1. **ການປິ່ນປົວຮູຮາກແຂ້ວ (Endodontics)**
   * **ຄວາມໝາຍ:** ແມ່ນສາຂາວິຊາໜຶ່ງທາງດ້ານທັນຕະກຳ ລວມທັງການສຶກສາ ແລະ ການປະຕິບັດທົດລອງທາງຊີວະສາດ, ສາຍເຫດ, ການບົ່ງມະຕິ, ການປ້ອງກັນ ແລະ ການປິ່ນປົວພະຍາດ, ການບາດເຈັບຂອງນອນແຂ້ວ ແລະ ສະພາບທີ່ເປັນພະຍາດທີ່ພົວພັນກັບບໍລິເວນອ້ອມຮາກແຂ້ວ.
   * **ຄວາມສາມາດຫຼັກ:**

   ທັນຕະແພດທົ່ວໄປ ມີຄວາມສາມາດ ດັ່ງນີ້:

   1) ບົ່ງມະຕິ ແລະ ປິ່ນປົວການເຈັບປວດໃນຜົ້ງປາກທີ່ມີຕົ້ນກຳເນີດຈາກນອນແຂ້ວ ແລະ/ຫຼື ບໍລິເວນອ້ອມຮາກແຂ້ວ (Pulpal and/or Periradicular Origin);
   2) ສັ່ງກວດ, ປະຕິບັດ, ດຳເນີນການ ແລະ ອ່ານຜົນພາບລັງສີແຂ້ວທາງດ້ານໃນ ແລະ ນອກຜົ້ງປາກ;
   3) ປິ່ນປົວ ແລະ ອັດຮູຮາກແຂ້ວ ດ້ວຍວິທີການທີ່ບໍ່ເຮັດການຜ່າຕັດ ເຖິງຈະມີ ຫຼື ບໍ່ມີພະຍາດອ້ອມຮາກແຂ້ວ ທີ່ເປັນຕົ້ນເຫດກໍ່ຕາມ;
   4) ປິ່ນປົວຮູຮາກແຂ້ວໃນຄັ້ງດຽວ ເມື່ອເຫັນວ່າມີຄວາມຈຳເປັນ;
   5) ເສີມຮາກແຂ້ວ ແລະ ຕໍ່ເຕີມຕົວແຂ້ວ (Post & Core) ໃສ່ຮູຮາກຂອງແຂ້ວທີ່ໄດ້ຮັບການປິ່ນປົວດີມາກ່ອນແລ້ວ;
   6) ໃຫ້ການບູລະນະຕົ້ນແຂ້ວແບບຖາວອນທີ່ຖືກຕ້ອງເໝາະສົມ;
   7) ການຟອກເນື້ອແຂ້ວ ແລະ ເຄືອບແຂ້ວ ໃຫ້ຂາວໃນແຂ້ວທີ່ຕາຍແລ້ວ;
   8) ປິ່ນປົວຮູຮາກແຂ້ວຄືນໃໝ່ເມື່ອມີຄວາມຈຳເປັນ;
   9) ປະຕິບັດການປິ່ນປົວດ້ວຍວິທີຮັກສານອນແຂ້ວໄວ້ ເຊັ່ນ: ຮຳບາດແຜນອນແຂ້ວ, ຕັດນອນແຂ້ວສ່ວນໃດສ່ວນໜຶ່ງອອກ;
   10) ປິ່ນປົວຮູຮາກແຂ້ວແບບສຸກເສີນ (Emergency);
   11) ປິ່ນປົວແຂ້ວທີ່ຖືກບາດເຈັບຈາກການກະທົບ;
   12) ໃຫ້ຢາຕ້ານເຊື້ອ, ຢາຕ້ານການອັກເສບ, ຢາແກ້ປວດ ແລະ ຢາອື່ນໆທີ່ເໝາະສົມຕາມຂອບເຂດການປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

2. **ທັນຕະລັງສີ (Dental Radiology)**
   * **ຄວາມໝາຍ:** ແມ່ນສາຂາວິຊາໜຶ່ງທາງດ້ານທັນຕະກຳ, ເປັນວິຊາລັງສີທີ່ກ່ຽວຂ້ອງກັບການຖ່າຍພາບ, ການອ່ານຜົນຂອງຮູບພາບ, ຂໍ້ມູນທີ່ຖ່າຍທອດຈາກລັງສີ ຊຶ່ງໃຊ້ເພື່ອການບົ່ງມະຕິພະຍາດ, ຄວາມບົກຜ່ອງແລະເງື່ອນໄຂທີ່ເປັນພະຍາດໃນບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ.

* **ຄວາມສາມາດຫຼັກ**

ທັນຕະແພດທົ່ວໄປ ມີຄວາມສາມາດ ດັ່ງນີ້:

1) ກວດຫົວ, ຄໍ, ປະຕິບັດ ແລະ ປະເມີນປະຫວັດທາງທັນຕະກໍາ ແລະ ການແພດ ເພື່ອກໍານົດການກວດຮູບພາບຢ່າງເໝາະສົມ;
2) ສັ່ງ, ຖ່າຍ ແລະ ອ່ານຜົນພາບລັງສີ ທີ່ກ່ຽວຂ້ອງກັບຜົ້ງປາກ, ຄາງກະໄຕ-ໃບໜ້າ ແລະ ແຂ້ວ;
3) ເຂົ້າໃຈກ່ຽວກັບຄວາມປອດໄພດ້ານລັງສີວິທະຍາ, ສອດຄ່ອງກັບຂໍ້ກໍານົດ ແລະ ລະບຽບກົດໝາຍຂອງ ສປປ ລາວ;
4) ຕັດສິນໃນການນໍາໃຊ້ຟິມ, ຟິມປະສົມກັບວິທີການກວດອື່ນໆ, ເຕັກນິກການຖ່າຍພາບ ແລະ ວິທີການອື່ນໆ ໃນການປະຕິບັດທາງດ້ານຄລີນິກ;
5) ສັ່ງກວດທາງດ້ານລັງສີວິທະຍາເຊັ່ນ: ແບບດັ້ງເດີມ, ແບບດິຈິຕອນ ເພື່ອຖ່າຍພາບໂຄງສ້າງພາຍໃນ/ນອກຜົ້ງປາກ, Computered Tomography Scan (CT Scan) ບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
6) ປະຕິບັດການປະເມີນຜົນຂອງຂໍ້ຕໍ່ຄາງກະໄຕໃບໜ້າ (TMJ) ຫຼື ບໍລິເວນ Implant ສະເພາະ;
7) ບັນທຶກຜົນການອ່ານຮູບພາບທີ່ສົ່ງມາປຶກສາ ແລະ ລາຍງານຜົນທີ່ໄດ້ຮັບ;
8) ຮັບຮູ້ ແລະຈັດການອະທິບາຍໂຕ້ຕອບຕໍ່ທາງສຽງທາງສັງຄົມ (Contrast media).

3. **ສັນລະຍະກໍາຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ (Oral and Maxillo-facial Surgery)**

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກໍາຂະແໜງໜຶ່ງ ເຊິ່ງປະກອບມີການບົ່ງມະຕິ, ການຜ່າຕັດ ແລະ ການປິ່ນປົວເສີມອື່ນໆ, ການບາດເຈັບ ແລະ ຄວາມພິການທີ່ກ່ຽວຂ້ອງກັບໜ້າທີ່ການ ແລະ ຄວາມງາມຂອງອະໄວຍະວະແຂງ ແລະ ອ່ອນໃນບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ.
* **ຄວາມສາມາດຫຼັກ:**

ທັນຕະແພດທົ່ວໄປ ມີຄວາມສາມາດ ດັ່ງນີ້:

1) ບົ່ງມະຕິ ແລະ ປິ່ນປົວ, ແກ້ໄຂຄວາມບົກຜ່ອງ ຫຼື ການບາດເຈັບໃນບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
2) ບົ່ງມະຕິ ແລະ ປິ່ນປົວ ຄວາມເຈັບປວດຢູ່ບໍລິເວນໃບໜ້າ;
3) ບົ່ງມະຕິ ແລະ ປິ່ນປົວ ຄວາມບົກຜ່ອງຂອງຂໍ້ຕໍ່ຄາງກະໄຕ ແລະ ພະຍາດຕ່ອມນໍ້າລາຍ;
4) ບົ່ງມະຕິ ແລະ ຈັດການຄວາມຜິດປົກກະຕິຂອງແຂ້ວ-ໃບໜ້າ, ທັງທີ່ເປັນມາແຕ່ກໍາເນີດ ຫຼື ເກີດຂຶ້ນຕາມພາຍຫຼັງ;
5) ສັ່ງກວດ ແລະ ອ່ານຜົນຮູບພາບລັງສີທີ່ກ່ຽວຂ້ອງ ໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
6) ປະເມີນ, ວາງແຜນປິ່ນປົວ ແລະ ປະຕິບັດການຜ່າຕັດແຂ້ວ, ກະດູກເບົ້າແຂ້ວ ລວມທັງການຖອນແຂ້ວທີ່ກີດຂວາງ ແລະ ການຜ່າຕັດອື່ນໆ ເພື່ອກຽມໃສ່ແຂ້ວທຽມ;

7) ເອົາກະດູກຄາງກະໄຕຫັກ ຫຼື ຫລຸດໂປກເຂົ້າບ່ອນ ແລະ ຄົງທີ່ໄວ້ດ້ວຍວິທີບໍ່ຜ່າຕັດ;
8) ປິ່ນປົວ ແລະ ໃຫ້ຢາເພື່ອແກ້ໄຂການຊຶມເຊື້ອທີ່ບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ ໃນກໍລະນີທີ່ມີອາການສົນ;
9) ສັ່ງຢາຢ່າງເໝາະສົມ ຕາມຂອບເຂດປະຕິບັດງານຂອງທັນຕະແພດ ໂດຍອີງຕາມກົດລະບຽບ ແລະ ກົດໝາຍ ຂອງ ສປປ ລາວ.

4. **ອາຍຸລະສາດຜົ້ງປາກ (Oral Medicine)**

* **ຄວາມໝາຍ**: ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳທີ່ກ່ຽວຂ້ອງ ກັບການຮັກສາສຸຂະພາບຜົ້ງປາກ, ການບົ່ງມະຕິ ແລະ ການປິ່ນປົວພະຍາດແບບບໍ່ຜ່າຕັດຄົນເຈັບ ແລະ ກໍລະນີທີ່ມີຄວາມບົກຜ່ອງໃນບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ.

* **ຄວາມສາມາດຫຼັກ.**

ທັນຕະແພດທົ່ວໄປ ມີຄວາມສາມາດ ດັ່ງນີ້:

1) ກວດ, ບົ່ງມະຕິ ແລະ ປິ່ນປົວ ພະຍາດເນື້ອເຍື່ອອ່ອນ ແລະ ຄວາມບົກຜ່ອງອື່ນໆ ຂອງບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ ລວມທັງໜ້າທີ່ການທຳງານທີ່ຜິດປົກກະຕິຂອງຕ່ອມນ້ຳລາຍ ແລະ ພະຍາດເຍື່ອເມືອກຂອງຜົ້ງປາກ;
2) ບົ່ງມະຕິ ແລະ ປິ່ນປົວ ພະຍາດທີ່ເກີດຈາກແຂ້ວ ແລະ ບໍ່ເກີດຈາກແຂ້ວຢູ່ບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
3) ສັ່ງ ແລະ ອ່ານຜົນຮູບພາບລັງສີຂອງຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ.
4) ບົ່ງມະຕິ ແລະ ປິ່ນປົວ ພະຍາດຊຶມເຊື້ອຈາກຈຸລິນຊີ, ຈຸລະໂລກ ແລະ ເຊື້ອເຫັດ ທີ່ຢູ່ໃນບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
5) ອ່ານຜົນການກວດຈາກຫ້ອງວິເຄາະ ແລະ ຜົນການກວດຈາກພາບລັງສີ ເພື່ອບົ່ງມະຕິ ແລະ ປິ່ນປົວຄົນເຈັບ;
6) ດຳເນີນການຜ່າຕັດຢ່າງປອດໄພ ແລະ ມີປະສິດທິຜົນເພື່ອປິ່ນປົວ ພະຍາດເນື້ອງອກທີ່ບໍ່ຮ້າຍແຮງ ຫຼື ຕັດເອົາເນື້ອເຍື່ອສົ່ງກວດ ເພື່ອການບົ່ງມະຕິ ໃນກໍລະນີທີ່ສົງໃສວ່າເປັນເນື້ອງອກຮ້າຍແຮງ (ມະເຮັງ);
7) ບົ່ງມະຕິ ແລະ ປິ່ນປົວ ຄວາມເຈັບປວດຊຳເຮື້ອໃນບໍລິເວນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ ແລະ ຄວາມບົກຜ່ອງຂອງຂໍ້ຕໍ່ຄາງກະໄຕ;
8) ບໍລິຫານຄຸ້ມຄອງສຸຂະພາບຜົ້ງປາກຂອງຄົນເຈັບ ທີ່ມີພະຍາດປະຈຳຕົວແບບຮ້າຍແຮງ;
9) ສັ່ງກວດສະເພາະ ຕາມຫຼັກການປິ່ນປົວທາງທັນຕະກຳ;
10) ສັ່ງຢາຢ່າງເໝາະສົມ ຕາມຂອບເຂດປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

5. ສັນລະຍະກຳຜົ້ງປາກ (Oral Surgery)

* **ຄວາມໝາຍ**: ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ເຊິ່ງປະກອບມີ ການປິ່ນປົວ, ການຜ່າຕັດ ແລະ ການປິ່ນປົວເສີມ, ການບາດເຈັບ ແລະ ຄວາມຜິດປົກກະຕິທີ່ກ່ຽວຂ້ອງກັບໜ້າທີ່ການທຳງານ ແລະ ຄວາມສວຍງາມຂອງຈີວະແຂງ ແລະ ອ່ອນໃນຜົ້ງປາກ.
* **ຄວາມສາມາດຫຼັກ**

ຄວາມສາມາດຫຼັກຂອງທັນຕະແພດທົ່ວໄປໃນສາຂາວິຊາຊີບດັ່ງກ່າວມີຄືດັ່ງລຸ່ມນີ້:

1) ບົ່ງມະຕິພະຍາດ ຫຼື ຄວາມບົກພ່ອງອື່ນໆ ໃນບໍລິເວນຜົ້ງປາກ;
2) ປະຕິບັດການຜ່າຕັດແຂ້ວ-ກະດູກເບົ້າແຂ້ວ ທັງແບບງ່າຍດາຍ ແລະ ຫຍຸ້ງຍາກ;
3) ປິ່ນປົວການກະທົບແຂ້ວ ແລະ ກະດູກເບົ້າແຂ້ວ;
4) ປິ່ນປົວຄວາມບົກພ່ອງຂອງຂໍ້ຕໍ່ຄາງກະໄຕ (TMJ) ແບບບໍ່ຜ່າຕັດ;
5) ປິ່ນປົວ ແລະ ສັ່ງຢາ ເພື່ອປິ່ນປົວການຊຶມເຊື້ອໃນຜົ້ງປາກ, ແຂ້ວ ແລະ ກະດູກເບົ້າແຂ້ວ;
6) ເອົາກະດູກຄາງຫັກ ຫຼື ຄາງກະໄຕຫຼຸດໂບກເຂົ້າບ່ອນ ແລະ ຄຶງທີ່ໄວ້;
7) ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
8) ບໍລິຫານຄຸ້ມຄອງ ຄົນເຈັບທີ່ມີການອັກເສບຜົ້ງລົມຄາງກະໄຕເທິງ ທີ່ມີສາຍເຫດມາຈາກແຂ້ວ;
9) ສັ່ງຢາຢ່າງເໝາະສົມ ຕາມຂອບເຂດປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
10) ດຳເນີນການບົ່ງມະຕິ ເພື່ອກຽມໃສ່ແຂ້ວທຽມ ແລະ ຝັງຮາກທຽມ.

6. ທັນຕະກຳດັດແປງ (Orthodontics)

* **ຄວາມໝາຍ**: ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ທີ່ປະກອບມີ ການບົ່ງມະຕິ, ການປ້ອງກັນ, ການສະກັດກັ້ນ ແລະ ການແກ້ໄຂຄວາມຜິດປົກກະຕິຂອງການກັດຫຍ້ຳ ເຊັ່ນດຽວກັນກັບຄວາມຜິດປົກກະຕິຂອງກ້າມຊີ້ນ-ປະສາດ ແລະ ໂຄງກະດູກ ໃນຂະນະກຳລັງເຕີບໂຕ ຫຼື ພັດທະນາການສົມບູນແບບໄປແລ້ວຂອງໂຄງສ້າງຜົ້ງປາກ ແລະ ໃບໜ້າ.
* **ຄວາມສາມາດຫຼັກ**

ຄວາມສາມາດຕົ້ນຕໍຂອງທັນຕະແພດທົ່ວໄປໃນສາຂາວິຊາຊີບດັ່ງກ່າວມີຄືດັ່ງລຸ່ມນີ້:

1) ບົ່ງມະຕິ ແລະ ກະກຽມແຜນການປິ່ນປົວແກ້ໄຂຄວາມຜິດປົກກະຕິຂອງແຂ້ວ-ໃບໜ້າ ແລະ ແຂ້ວ/ໂຄ້ງແຂ້ວບໍ່ເຂົ້າກັນ (Tooth/Arch Discrepancy) ໂດຍມີການປະສານງານ ແລະ ຕິດຕາມຢ່າງໃກ້ຊິດກັບຂະແໜງການອື່ນໆ;
2) ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
3) ລຶບລ້າງ/ກຳຈັດການສູນເສຍຄວາມສາມາດໃນການຫຍ້ຳທີ່ບໍ່ຖືກຕ້ອງ (Malocclusion);

4) ຫຼຸດຜ່ອນຄວາມສ່ຽງຕໍ່ການເປັນແຂ້ວແມງ, ພະຍາດເຝືອນແຂ້ວ ແລະ ພະຍາດປະຣິທັນ ທີ່ເກີດຈາກແຂ້ວຊ້ອນກັນ;
5) ລຶບລ້າງອຸປະນິໄສທີ່ເປັນອັນຕະລາຍ/ບໍ່ດີ;
6) ປົວແປງເຮັດໃຫ້ຄວາມງາມຂອງຜົ້ງປາກ-ໃບໜ້າດີຂຶ້ນ;
7) ດັດແກ້ຄວາມຜິດປົກກະຕິ ຂອງການກັດຫຍໍ້າ (Occlusion) ໃຫ້ຖືກຕ້ອງ;
8) ນຳໃຊ້ເຄື່ອງມືທຸກປະເພດເພື່ອຈັດຕຳແໜ່ງແຂ້ວໃຫ້ຖືກຕ້ອງ (Aligners) ສຳລັບການເຄື່ອນຍ້າຍ ຫຼື ຄົງທີ່ໂຄງສ້າງຄາງກະໄຕ-ໃບໜ້າ;
9) ໃຫ້ຢາຢ່າງເໝາະສົມ ຕາມຂອບເຂດປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

## 7. ທັນຕະກຳເດັກ (Pediatric Dentistry)

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ທີ່ໃຫ້ທັງການປິ່ນປົວ ແລະ ປ້ອງກັນສຸຂະພາບຜົ້ງປາກແກ່ເດັກນ້ອຍກ່ອນໄວຮຽນຈົນເຖິງໄວໜຸ່ມ ລວມທັງຜູ່ທີ່ມີຄວາມຕ້ອງການ ດູແລແບບພິເສດ ແລະ ຜູ່ມີບັນຫາທາງຈິດ.
* **ຄວາມສາມາດຫຼັກ**

ຄວາມສາມາດຫຼັກຂອງທັນຕະແພດໃນສາຂາວິຊາຊີບດັ່ງກ່າວມີຄືດັ່ງລຸ່ມນີ້:

1) ໃຫ້ການປຶກສາ ແນະນຳພໍ່ແມ່ ແລະ ເດັກນ້ອຍໃຫ້ຍອມຮັບ ແລະ ປະຕິບັດການດູແລຜົ້ງປາກ ເພື່ອປ້ອງກັນພະຍາດ;
2) ບົ່ງມະຕິພະຍາດຜົ້ງປາກ ທີ່ກ່ຽວຂ້ອງກັບເດັກນ້ອຍ ແລະ ປະຕິບັດການແກ້ໄຂທີ່ເໝາະສົມ;
3) ບົ່ງມະຕິ ແລະ ປິ່ນປົວແຂ້ວນ້ຳນົມ ແລະ ແຂ້ວຖາວອນທີ່ເປັນພະຍາດ ແລະ ຖືກກະທົບ;
4) ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ.
5) ປິ່ນປົວແຂ້ວເດັກນ້ອຍ ທີ່ມີແຂ້ວນ້ຳນົມ ແລະ ແຂ້ວຖາວອນປະສົມຢູ່ໃນຜົ້ງປາກ;
6) ໃຫ້ການດູແລຮັກສາສຸຂະພາບຜົ້ງປາກຢ່າງຄົບຖ້ວນ ສຳລັບເດັກທີ່ມີບັນຫາກ່ຽວກັບພຶດຕິກຳ ແລະ ມີຄວາມຈຳເປັນໃນການດູແລສຸຂະພາບແບບພິເສດ ທີ່ມີຄວາມພິການທາງດ້ານຮ່າງກາຍ ແລະ ຈິດໃຈ;
7) ແກ້ໄຂຄວາມຊິນເຄີຍທີ່ບໍ່ດີເຊັ່ນ: ການດູດໂປ້ມື, ດູດສົບ ແລະ ຫົວນົມທຽມ (ໝາກແວ້) ແລະ ການຍູ້ດັນຂອງລີ້ນ;
8) ໃຫ້ຢາຢ່າງເໝາະສົມ ຕາມຂອບເຂດປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

* **ທັກສະເພີ່ມເຕີມອື່ນໆທີ່ຕ້ອງການ**

1) ໃຊ້ຢາລະງັບປະສາດ (Conscious sedation); 2) ຄວບຄຸມພຶດຕິກຳ ແລະ ຄວບຄຸມດ້ວຍການໃຫ້ຢາ.

8. ທັນຕະກຳປ້ອງກັນ ແລະ ທັນຕະກຳຊຸມຊົນ (Preventive and CommunityDentistry)

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ ທີ່ປະກອບດ້ວຍການປິ່ນປົວ, ການປ້ອງກັນ, ການສົ່ງເສີມບໍ່ໃຫ້ເກີດພະຍາດຜົ້ງປາກ ແລະ ແຂ້ວ ໃນຊຸມຊົນ ໂດຍຜ່ານໂຄງການຮັກສາສຸຂະພາບຜົ້ງປາກ ແລະ ແຂ້ວຂັ້ນຕົ້ນ.
* **ຄວາມສາມາດຫຼັກ**

ຄວາມສາມາດຫຼັກຂອງທັນຕະແພດທົ່ວໄປໃນສາຂາວິຊາຊີບດັ່ງກ່າວມີດັ່ງລຸ່ມນີ້:

1) ປ່ຽນພຶດຕິກຳ, ຄວາມຮັບຮູ້ຂອງຊຸມຊົນ ກ່ຽວກັບສຸຂະພາບຜົ້ງປາກ ແລະ ພະຍາດອື່ນໆ;
2) ເອົາອຸປະສັກລະຫວ່າງຄົນ ແລະ ການບໍລິການສຸຂະພາບຜົ້ງປາກອອກ;
3) ຝຶກອົບຮົມ ແລະ ນຳໃຊ້ເຫດຜົນທາງວິທະຍາສາດ ຢ່າງມີປະສິດທິຜົນ ເພື່ອປັບປຸງສຸຂະພາບຜົ້ງປາກ;
4) ສ້າງ ແລະ ສະໜັບສະໜູນການຮ່ວມມືກັບບັນດາທັນຕະແພດດ້ວຍກັນ, ຜູ່ຊ່ຽວຊານດ້ານສຸຂະພາບອື່ນ, ອົງການສາທາລະນະສຸກ, ກຸ່ມທຸລະກິດ ແລະ ກຸ່ມບໍລິການສັງຄົມ ເພື່ອກຳນົດເປົ້າໝາຍຮ່ວມກັນແນໃສ່ປັບປຸງ ແລະ ແກ້ໄຂຄວາມຕ້ອງການດ້ານສຸຂະພາບຜົ້ງປາກຂອງປະຊາຊົນ;
5) ສ້າງຄວາມເຂັ້ມແຂງ ແລະ ຂະຫຍາຍຄວາມສາມາດໃນການສຶກສາ-ຄົ້ນຄວ້າທາງທັນຕະກຳ;
6) ສ້າງແຜນຍຸດທະສາດ ເພື່ອສະເໜີຄວາມຕ້ອງການດ້ານງົບປະມານ ໃນການປະຕິບັດວຽກງານ, ການສຶກສາ ແລະ ການຄົ້ນຄ້ວາທາງທັນຕະກຳເພື່ອຮັບປະກັນຄວາມຍືນຍົງຂອງວຽກງານ;
7) ກວດຄັດແຍກພະຍາດຊຳເຮື້ອ ແລະ ພະຍາດທາງລະບົບ/ເງື່ອນໄຂທີ່ເປັນພະຍາດຕ່າງໆເຊັ່ນ: ຮອຍພະຍາດໃນຜົ້ງປາກ, ເບົາຫວານ, ການນອນກັ້ນຫາຍໃຈ (ນອນກົນ), ຄວາມອ້ວນ ແລະ ອື່ນໆ.

9. ປະຣິທັນວິທະຍາ (Periodontics)

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ປະກອບມີ ການປ້ອງກັນ, ການບົ່ງມະຕິ ແລະ ການປິ່ນປົວພະຍາດຂອງອະໄວຍະວະຄ້ຳຊູ ແລະ ອ້ອມຮອບແຂ້ວ ຫຼື ອົງປະກອບຂອງມັນ ເພື່ອຮັກສາໄວ້ຊຶ່ງຄວາມປົກກະຕິ, ມີສຸຂະພາບດີ, ເຮັດໜ້າທີ່ການໄດ້ ແລະ ຄົງຄວາມສວຍງາມຂອງໂຄງສ້າງແລະເນື້ອເຍື່ອເຫຼົ່ານີ້.
* **ຄວາມສາມາດຫຼັກ**

ຄວາມສາມາດຫຼັກຂອງທັນຕະແພດໃນສາຂາວິຊາຊີບດັ່ງກ່າວມີດັ່ງລຸ່ມນີ້:

1) ເສີມສ້າງ ແລະ ຮັກສາໄວ້ເຊິ່ງໂຄງສ້າງທີ່ດີຂອງຈີວະແຂງ ແລະ ອ່ອນຂອງຜົ້ງປາກໃຫ້ແຂງແຮງ ເພື່ອຄ້ຳຊູແຂ້ວ ແລະ ຮາກແຂ້ວ;
2) ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
3) ປະເມີນການກັດຫຍໍ້າຂອງຄົນເຈັບ ແລະສະໜອງທາງເລືອກໃນການປິ່ນປົວແຂ້ວທີ່ເປັນພະຍາດປະລິທັນ;
4) ປະຕິບັດຂັ້ນຕອນສັນລະຍະກຳແບບສອຍເນື້ອເຍື່ອຕາຍອອກ ຊຶ່ງລວມມີ: ການຂູດຫີນປູນ, ການຜັດແຂ້ວ

ແລະ ການຂູດຮາກແຂ້ວ (ແບບບໍ່ຜ່າຕັດ);

5) ຕັດຈອມແຂ້ວອອກ (Bicuspidization) ແລະ ຕັດຕົ້ນແຂ້ວອອກສ່ວນໃດສ່ວນໜຶ່ງ (Hemi-section) ເພື່ອປັບດັດການກັດຫຍ້ຳ;
6) ປິ່ນປົວການຊຶມເຊື້ອ/ອັກເສບເຝັນແຂ້ວ ແລະ ອະໄວຍະວະປະຣິທັນ;
7) ໃສ່ຢາເຄມີບຳບັດ ລວມທັງວັດສະດຸຍ່ອຍສະຫຼາຍຊ້ຳ ໃນອະໄວຍະວະປະຣິທັນ;
8) ໃຫ້ຢາຢ່າງເໝາະສົມ ຕາມຂອບເຂດປະຕິບັດງານຂອງທັນຕະແພດ, ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
9) ປະຕິບັດການຜ່າຕັດສາຍຫ້າມຕ່າງໆ ເພື່ອປັບດັດໃຫ້ເຮັດໜ້າທີ່ການໄດ້ດີຂຶ້ນ.

## 10. ແຂ້ວທຽມວິທະຍາ (Prosthodontics)

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ຊຶ່ງປະກອບດ້ວຍ ການບົ່ງມະຕິ, ການວາງແຜນການປິ່ນປົວ, ການຟື້ນຟູໜ້າທີ່ການ ແລະ ການຮັກສາໜ້າທີ່ການຂອງຜົ້ງປາກ, ຄວາມຢູ່ສະບາຍ, ຄວາມສວຍງາມ ແລະ ຄວາມຢູ່ດີມີສຸຂະພາບຂອງຄົນເຈັບ ຕາມເງື່ອນໄຂໃນການຂາດແຂ້ວ ແລະ/ຫຼື ອະໄວຍະວະຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ ໂດຍໃຊ້ວັດສະດຸທີ່ຮ່າງກາຍຍອມຮັບໄດ້ (Maxillo-Facial Biocompatible Substitutes).
* **ຄວາມສາມາດຫຼັກ**

  ຄວາມສາມາດຫຼັກຂອງທັນຕະແພດໃນສາຂາວິຊາຊີບດັ່ງກ່າວມີຄືດັ່ງລຸ່ມນີ້:

1) ກວດ, ບົ່ງມະຕິ ແລະ ວາງແຜນປິ່ນປົວຄົນເຈັບທີ່ບໍ່ມີແຂ້ວບາງສ່ວນ ຫຼື ໝົດປາກທີ່ຕ້ອງການຟື້ນຟູໜ້າທີ່ການ (ໃສ່ແຂ້ວທຽມ);
2) ບູລະນະແຂ້ວຫຼາຍເຫຼັ້ມ ຫຼື ເຫຼັ້ມດຽວ, ໃສ່ແຂ້ວທຽມຕິດແໜ້ນ ຫຼື ຖອດອອກໄດ້ ຕາມຄວາມເໝາະສົມ, ບູລະນະຮູບຮ່າງກາຍະວິພາກແຂ້ວ, ໜ້າທີ່ການ ແລະ ຄວາມສວຍງາມຂອງຄົນເຈັບໃນທຸກໆໄວ;
3) ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ.
4) ຟື້ນຟູໜ້າທີ່ການຂອງຄົນເຈັບ ທີ່ມີຄວາມຈຳເປັນຕ້ອງໃສ່ແຂ້ວທຽມຕິດແໜ້ນ ດ້ວຍການບູລະນະບາງສ່ວນ ຫຼື ໝົດເຫຼັ້ມ ດ້ວຍວັດສະດຸ, ເຕັກນິກທັງທາງກົງ ແລະ ທາງອ້ອມ;
5) ບູລະນະແຂ້ວທີ່ຕົ້ນແຂ້ວຖືກທຳລາຍແລ້ວ ດ້ວຍການຄ່ຳຫຼັກ/ເສີມຕໍແບບສຳເລັດຮູບ ແລະ ແບບຫຼໍ່ຫຼອມ (Prefabricated and Casted Post & Core);
6) ໃສ່ແຂ້ວທຽມ ອາດເນື່ອງຈາກການສູນເສຍແຂ້ວ ຫຼື ສູນເສຍໂຄງສ້າງຂອງແຂ້ວ ເພື່ອຟື້ນຟູໜ້າທີ່ການຂອງຜົ້ງປາກ;
7) ເຮັດແຂ້ວທຽມຄົບຊຸດ ສຳລັບຄົນເຈັບທີ່ບໍ່ມີແຂ້ວໝົດປາກ;
8) ປະຕິບັດຫຼັກການຕ່າງໆ ຂອງການອອກແບບແຂ້ວທຽມພາກສ່ວນ;

9) ຟື້ນຟູໜ້າທີ່ການຂອງຄົນເຈັບທີ່ບໍ່ມີແຂ້ວພາກສ່ວນ ຫຼື ໝົດປາກ ດ້ວຍການໃສ່ແຂ້ວທຽມເທິງຫຼັກຮາກທຽມ (Implant);

10) ປະຕິບັດການປິ່ນປົວ ດ້ວຍການດັດແປງການກັດຫຍໍ້າ ເພື່ອເຮັດໃຫ້ມີຄວາມສົມດູນຂອງຮອງແຂ້ວ ແບບທຳມະຊາດ ແລະ ລະບົບການກັດຫຍໍ້າແບບປົກກະຕິ (Stomatognathic System);

11) ບົ່ງມະຕິ ແລະ ປິ່ນປົວຄວາມບົກຜ່ອງ ຂອງຂໍ້ຕໍ່ຄາງກະໄຕ (TMJ) ແບບບໍ່ຜ່າຕັດ;

12) ສ້າງແບບຈຳລອງ (Stents) ປະເພດຕ່າງໆຕາມກໍລະນີທາງດ້ານຄລີນິກ, ເຮັດແຂ້ວທຽມແບບທັນທີທັນໃດຊະນິດຖອດໄດ້ທັງຄົບຊຸດ ແລະ ພາກສ່ວນ.

* **ທັກສະເພີ່ມເຕີມອື່ນໆທີ່ຈຳເປັນ:**
  - ປິ່ນປົວຄົນເຈັບຜູ້ອາຍຸສູງ, ຜູ້ທີ່ມີບັນຫາດ້ານຄາງກະໄຕ-ໃບໜ້າ ແລະ ຄົນເຈັບທີ່ມີຄວາມຕ້ອງການ ການດູແລພິເສດ;
  - ຟື້ນຟູໜ້າທີ່ການ ທີ່ມີຄວາມຜິດປົກກະຕິຂອງຄາງກະໄຕ-ໃບໜ້າ ມາແຕ່ກຳເນີດ/ຫຼັງເກີດ ດ້ວຍອຸປະກອນເຄື່ອງມືຊົ່ວຄາວ ຫຼື ຖາວອນ;
  - ຟື້ນຟູໜ້າທີ່ການ ຂອງຄາງກະໄຕທີ່ມີຄວາມຜິດປົກກະຕິພາຍຫຼັງການຜ່າຕັດ;
  - ຊ່ວຍເຫຼືອໃນການປິ່ນປົວການຢຸດຫາຍໃຈເວລານອນ (ນອນກັ້ນຫາຍໃຈ) ດ້ວຍການໃຊ້ເຄື່ອງມືຕ່າງໆ;
  - ປະຕິບັດການປິ່ນປົວດ້ວຍເຄື່ອງທຽມສຳລັບຄົນເຈັບທີ່ເປັນມະເຮັງ.

## 11. ທັນຕະກຳບູລະນະ (Restorative Dentistry)

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ທີ່ກ່ຽວຂ້ອງກັບ ການບົ່ງມະຕິ ແລະ ການປິ່ນປົວພະຍາດແຂ້ວແມງ ແລະ ຄວາມບົກຜ່ອງຂອງແຂ້ວ, ໂຄງສ້າງຄ້ຳຊູຂອງແຂ້ວ ລວມທັງການບູລະນະ ແລະ ທົດແທນຄືນ.
* **ຄວາມສາມາດຫຼັກ**

  ຄວາມສາມາດຫຼັກຂອງທັນຕະແພດໃນສາຂາວິຊາຊີບດັ່ງກ່າວມີຄືດັ່ງລຸ່ມນີ້:

  1) ປະຕິບັດການບູລະນະແຂ້ວ ແບບງ່າຍດາຍ ແລະ ສັບສົນເພື່ອຮັກສາຄວາມສອດຄ່ອງ ລະຫວ່າງຮູບລັກສະນະ, ການກັດຫຍໍ້າ, ການເຮັດໜ້າທີ່ການ ແລະ ຮັກສາຄວາມສົມບູນຂອງຈີ່ະອ່ອນ ແລະ ແຂງທີ່ຢູ່ຂ້າງຄຽງເຫຼັ້ມແຂ້ວ;
  2) ບົ່ງມະຕິ ແລະ ປິ່ນປົ່ວນວນແຂ້ວທີ່ເປັນພະຍາດ ຫຼື ຖືກບາດເຈັບຍ້ອນການກະທົບ ແລະ ປະຕິບັດການປິ່ນປົວຮູຮາກແຂ້ວ ຖ້າຈຳເປັນ;
  3) ສັ່ງ ແລະ ອ່ານຜົນຮູບພາບລັງສີໃນຜົ້ງປາກ ແລະ ຄາງກະໄຕ-ໃບໜ້າ;
  4) ປິ່ນປົວ ແລະ ແກ້ໄຂຄວາມບົກຜ່ອງໃນການກັດຫຍໍ້າຈາກການບູລະນະ ເພື່ອການກັດຫຍໍ້າທີ່ຖືກຕ້ອງເໝາະສົມ;
  5) ສະແດງອອກໃຫ້ເຫັນທັກສະລະດັບສູງຂອງຕົນໃນການເລືອກ ແລະ ໃຊ້ເຕັກນິກທີ່ເໝາະສົມທຸກຂັ້ນຕອນຂອງການປິ່ນປົວທີ່ວາງໄວ້;

6) ໃຫ້ການປິ່ນປົວແຂ້ວ ເພື່ອຄວາມສວຍງາມໂດຍໃຊ້ວິທີການບູລະນະທາງກົງ ແລະ ທາງອ້ອມ.

* **ທັກສະເພີ່ມເຕີມອື່ນໆທີ່ຈຳເປັນ**
  - ປິ່ນປົວພະຍາດປະລິທັນອັກເສບຊະນິດອື່ນໆ.

## 12. ທັນຕະກຳພິສູດຊາກສົບ/ທັນຕະກຳພິສູດຫຼັກຖານ (Forensic Dentistry)

* **ຄວາມໝາຍ:** ແມ່ນສາຂາວິຊາສະເພາະທາງດ້ານທັນຕະກຳຂະແໜງໜຶ່ງ, ທີ່ກ່ຽວຂ້ອງກັບການກວດກາ ແລະ ການປະເມີນຜົນ ຕາມຫຼັກຖານທາງທັນຕະກຳ ເພື່ອຊ່ວຍເຈົ້າໜ້າທີ່ທາງກົດໝາຍ ໃນການດຳເນີນຄະດີທາງແພ່ງ ຫຼື ທາງອາຍາ.
* **ຄວາມສາມາດຫຼັກ**

  ຄວາມສາມາດຫຼັກຂອງທັນຕະແພດໃນສາຂາວິຊາຊີບດັ່ງກ່າວມີຄືດັ່ງລຸ່ມນີ້:

  1) ເກັບກຳຂໍ້ມູນ ແລະ ເອກະສານ/ຫຼັກຖານທາງທັນຕະກຳໂດຍໃຊ້ເຕັກນິກ ແລະ ວິທີການພິເສດ;
  2) ຢັ້ງຢືນທາງທັນຕະກຳ ກ່ອນ ແລະ ຫຼັງການຕາຍ ໂດຍມີການສົມທຽບ, ຕົບແຕ່ງຄືນໃໝ່ ຫຼື ຊອກຫາຫຼັກຖານທາງທັນຕະກຳ (ກະດູກ, ແຂ້ວ, ຮູບພາບລັງສີ, ຜົນກວດທາງເລືອດ ແລະ ກຳມະພັນທີ່ເຫຼືອຢູ່/Serologic and Genetic Remnants) ໃນກໍລະນີເກີດການຄາດຕະກຳ, ບຸກຄົນສູນຫາຍ ຫຼື ເກີດໄພພິບັດທີ່ໃຫຍ່ຫຼວງ;
  3) ມີເອກະສານບັນທຶກ ແລະ ວິເຄາະຈຸດ/ເສັ້ນສະແດງກ່ຽວກັບການກັດຫຍໍ້າ (ຕຳນິຕ່າງ ໆ);
  4) ຮູ້ເຖິງສັນຍານ ຫຼື ເຄື່ອງສະແດງ ແລະ ອາການຂອງການລ່ວງລະເມີດຂອງມະນຸດ (ລວມທັງຄວາມຮຸນແຮງຂອງຄູ່ຜົວເມຍ, ການລ່ວງລະເມີດຜູ້ເຖົ້າຜູ້ແກ່ ແລະ ການລ່ວງລະເມີດເດັກ) ສິດທິ ແລະ ຄວາມຮັບຜິດຊອບຂອງທັນຕະແພດ ໃນການບໍລິການທາງທັນຕະກຳ ເມື່ອມີລາຍງານໃນກໍລະນີດັ່ງກ່າວ;
  5) ໃຫ້ການຮັບຮອງຈາກຜູ່ຊ່ຽວຊານ ໃນການພິພາກສາ ຄະດີທາງແພ່ງ ແລະ ທາງອາຍາ;
  6) ຄຸ້ມຄອງ ແລະ ຮັກສາຂໍ້ມູນທາງທັນຕະກຳຂອງຄົນເຈັບທີ່ໄດ້ບັນທຶກໄວ້ ເພື່ອໃຊ້ເປັນຫຼັກຖານອ້າງອີງທາງກົດໝາຍ ເພື່ອເປັນການຢັ້ງຢືນໃຫ້ແກ່ຄົນເຈັບ ແລະ ຫຼຸດຜ່ອນຄວາມຜິດພາດໃນການຮ້ອງຟ້ອງ;
  7) ປະເມີນອາຍຸ ແລະ ກຳນົດເພດຂອງບຸກຄົນ.